# ໂຮງຮຽນວັນອາທິດ

**ວັນອາທິດທີ 23 ເດືອນ ພຶສພາ 2021 (05-23-2021)**

## ແບ່ງປັນຂ່າວປະເສີດ

*ມີຫົວຂໍ້ເລື່ອງໃດທີ່ທ່ານພ້ອມສເມີທີ່ຈະແບ່ງປັນທຸກເມື່ອ?*

**ຈຸດສຳຄັນໃນບົດຮຽນ**: ການສົນທະນາຂອງເຮົາແຕ່ລະວັນເປັນໂອກາດໃຫ້ເຮົາແບ່ງປັນພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າເຄີຍເປີດຄອມພິວເຕີເພື່ອເຮັດບົດຝຶກຫັດໃນໂຮງຮຽນ. ຂ້າພະເຈົ້າກໍຫາກໍ່ເປັນຄຣິສຕຽນໃໝ່, ຂ້າພະເຈົ້າໄດ້ໃຊ້ກຳນົດເວລາສີ່ສິບຫ້ານາທີນັ້ນຫາທາງອ່ານແລະສຶກສາພຣະຄັມພີ. ມີໂອກາດນຶ່ງ ຍິງຄົນນຶ່ງໄດ້ນັ່ງລົງຂ້າງຂ້າພະເຈົ້າໃນຂນະທີ່ພຣະຄັມພີເປີດຢູ່ເທິງຕັກຂອງຂ້າພະເຈົ້າ, ແລະນາງກໍພຍາຍາມສອດສ່ອງເບິ່ງວ່າຂ້າພະເຈົ້າກຳລັງເຮັດຫຍັງຢູ່. ສິ່ງນີ້ເປັນການກວນປະສາດຂ້າພະເຈົ້າ. ຍິງສອດຮູ້ສອດເຫັນຜູ້ນີ້ຊ່າງມາລົບກວນເວລາສຶກສາພຣະຄັມພີຂ້າພະເຈົ້າແທ້! ຂ້າພະເຈົ້າຍັບອອກໄກຈາກນາງ ແຕ່ນາງກໍຍິ່ງງຸ່ງມາໃສ່. ໃນທີ່ສຸດຂ້າພະເຈົ້າກໍເລີຍຢຸດອ່ານ, ເອົາມືປິດພຣະຄັມພີໄວ້, ແລະແນມເບິ່ງໜ້ານາງ. ນາງຄົງສັງເກດເຫັນແນ່ນອນ. ຫຼັງຈາກເວລາເຂີນໜ້ອຍນຶ່ງຂ້າພະເຈົ້າກໍຫັນເຂົ້າສູ່ການສົນທະນາ. ຂ້າພະເຈົ້າຈື່ໄດ້ວ່າການອະທິຖານມື້ເຊົ້ານີ້ແມ່ນຂໍພຣະເຈົ້າປະທານໂອກາດແບ່ງປັນພຣະເຢຊູຄຣິດແກ່ບາງຄົນ. ໂອກາດນັ້ນກໍຢູ່ຕໍ່ໜ້າຂ້າພະເຈົ້າໃນເວລານີ້, ແລະຂ້າພະເຈົ້າເກືອບເສັຽມັນໄປເພາະວ່າຂ້າພະເຈົ້າສຸມໃສ່ແຕ່ເວລາຕົວເອງກັບພຣະເຈົ້າ.

ພວກເຮົາມີ "ໂອກາດຫຼາຍປະຕູ" ທຸກວັນເພື່ອແບ່ງປັນພຣະຄຣິດ, ແຕ່ພວກເຮົາມັກເສັຽໂອກາດເຫຼົ່ານັ້ນໄປ. ພຣະເຢຊູຢາກເລົ່າເຣື່ອງຂອງພຣະອົງຜ່ານເຮົາ. ພວກເຮົາຄວນພັ່ງພ້ອມແບ່ງປັນ.

**ພຣະຄັມພີກ່າວວ່າແນວໃດ** : (ເບິ່ງຕາມຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

**1. <u>ກິຈການ 17:16-18.</u>**

*16. ຂນະທີ່ໂປໂລຍັງລໍຖ້າຊີລາກັບຕີໂມທຽວຢູ່ກຸງອາແຖນນັ້ນ ທ່ານກໍມີຄວາມເດືອດຮ້ອນເຄືອງໃຈ ເພາະໄດ້ເຫັນເມືອງນັ້ນເຕັມໄປດ້ວຍພຣະທຽມ. 17. ເຫດສັນນັ້ນທ່ານຈຶ່ງໄດ້ໂຕ້ຖຽງກັບພວກຢິວ ແລະຜູ້ທີ່ຢຳເກງພຣະເຈົ້າໃນໂຮງທັມແລະກັບບຸກຄົນທີ່ພົບໃນບ່ອນປະຊຸມຊົນທຸກວັນ. 18. ມີນັກປາດລາງຄົນໃນພວກເອປີກູຣຽວແລະໃນພວກຊະໂຕອີໂກໄດ້ມາພົບທ່ານ ລາງຄົນກ່າວວ່າ, "ຄົນເກັບເລັມຄວາມຮູ້ຜູ້ນີ້ຢາກເວົ້າອັນໃດ" ລາງຄົນກ່າວວ່າ "ເໝືອນເປັນຜູ້ປະກາດພຣະຕ່າງດ້າວ" ເພາະໂປໂລປະກາດຂ່າວປະເສີດເຣື່ອງພຣະເຢຊູ ແລະການຄືນມາຈາກຕາຍ.*

ທ່ານໂປໂລມີ "ປະຕູໂອກາດ" ໃນກຸງອາແຖນ. ໂອກາດນີ້ມາກັບຄວາມເດືອດຮ້ອນເຄືອງໃຈເພາະໄດ້ເຫັນເມືອງນັ້ນເຕັມໄປດ້ວຍພຣະທຽມ. ທ່ານໂປໂລສັງເກດເຫັນວິນຍານໃນອາກາດສະຖານບໍ່ກ່ຽວກັບພຣະເຈົ້າເລີຍ. ເຫດສະນັ້ນ ຄົນທັງຫຼາຍຈຶ່ງຕິດພັນຢູ່ກັບການນະມັສການພຣະທຽມ.

*ເວລາໃດທ່ານຫຼຽວເບິ່ງກຸ່ມຊຸມຊົນຂອງທ່ານແລ້ວເປັນທຸກໜັກໃຈ?*

ທ່ານໂປໂລຖືໂອກາດນີ້ຢ່າງຊານສລາດໂດຍການເຂົ້າສນິດຄັ້ງແລກ "ກັບຊາວຢິວແລະຜູ້ນະມັສການພຣະເຈົ້າ"(ຂໍ້17) ໃນເມື່ອເພິ່ນລົ້ງເຖິງກັບເຂົາສ່ວນຫຼາຍ. ນີ້ເປັນທັມນຽມປະຕິບັດຊຶ່ງເພິ່ນເຄີຍສັ່ງສອນໃນໂຮງທັມ. ເມື່ອໃດທ່ານໂປໂລເຂົ້າໄປເມືອງໃໝ່, ເພິ່ນກໍເລີ່ມຕົ້ນດ້ວຍການເຂົ້າຫາຊາວຢິວ ແລະຄົນນະມັສການຊາວຕ່າງຊາດ. ທຸກວັນສະບາໂຕເພິ່ນໄດ້ພົບເຂົາຢູ່ໂຮງທັມສາລາ. ຊາວຢິວບໍ່ຮູ້ຈັກພຣະຄຣິດ, ແຕ່ ເຂົາຮູ້ຈັກພຣະເຈົ້າ. ທ່ານໂປໂລສາມາດໃຊ້ຄໍາທໍານວາຍເກົ່າແກ່ເປັນພື້ນຖານຂອງການສັ່ງສອນ, ແລະຜູ້ຊົມສາມາດຕິດຕາມເຫດຜົນຂອງເພິ່ນ. ຣະຫວ່າງວັນສະບາໂຕເຂົາສາມາດພົບເຫັນທ່ານໂປໂລທ່າມກາງຄົນໃນເມືອງ. ໃນກຸງອາແຖນ ເພິ່ນຍ່າງເຂົ້າໄປຕລາດ-ອາໂກຣາ-ແລະໄດ້ຈູດສະນອນການສົນທະນາ. ໃນຕລາດແຫ່ງນີ້ ເພິ່ນໄດ້ພົບປະ ກັບນັກປາດສອງປະເພດຄື:

1. **ພວກເອປີໂກຣຽວ** ເຊື່ອວ່າຈຸດປະສົງຂອງຊີວິດແມ່ນການຊອກຫາຄວາມສນຸກສນານ ແລະ ລົບລ້າງຄວາມເຈັບປວດ. ເຂົາຄິດວ່າພຣະເຈົ້າ, ຖ້າມີຈິງ, ກໍບໍ່ກ່ຽວກັບຊີວິດເຮົາ. ຍິ່ງໄປກວ່ານັ້ນ ເຂົາບໍ່ເຊື່ອຊີວິດຫຼັງຄວາມຕາຍ.
2. **ພວກຊະໂຕອິໂກ** ແມ່ນພວກລັດທິນິຍົມສິ່ງຕາເຫັນ, ເຊື່ອໃນສິ່ງເຫັນກັບຕາທີ່ປາກົດໃນຈັກກະວານ ແລະ ທັມມະຊາດ ລວມທັງມະນຸດ. ພວກເຂົາເຊື່ອໂດຍນຶກວ່າຂີດຄວາມສາມາດສູງສຸດແມ່ນການດໍາເນີນຊີວິດດ້ວຍເຫດຜົນ. ເຂົາໃຫ້ຄຸນຄ່າວິຖີຊີວິດກຸ້ມຕົວເອງ (Self-sufficiency). ພວກຊະໂຕອິໂກເຊື່ອວ່າເຂົາສາມາດກໍາຈັດຄວາມທຸກທໍຣະມານດ້ວຍປັນຍາອັນເລີດລໍ້າ.

ທີ່ນີ້ ໃນສູນກາງວັທນາທັມແລະປັນຍາຂອງອານາຈັກໂຣມັນ, ແມ່ນປລາໂຕ, ໂຊກະເຣຕິສ, ແລະອາຣິສໂຕໂຕລ໌ໄດ້ສອນຄັ້ງນຶ່ງ, ບ່ອນທີ່ພວກນັກປາດຍັງມັກໂຕ້ຖຽງກັນ, ທ່ານໂປໂລພຸ່ງເຂົ້າສູ່ການໂຕ້ຖຽງກັບພວກນັກປາດ ຜູ້ທີ່ຢູ່ໃນໂລກແຫ່ງຄວາມເຊື່ອຄົນລະໜ່ວຍຈາກຄວາມເຊື່ອຂອງເພິ່ນ. ເປັນທີ່ປະຈັກແຈ້ງວ່າ ເຖິງນັກປາດເຫຼົ່ານີ້ໄດ້ເຍາະເຍີ້ຍທ່ານໂປໂລ, ເຍາະເຍີ້ຍວ່າເປັນ "ຄົນເວົ້າໃຫຍ່ບໍ່ຈຽມຕົວ" ແຕ່ທ່ານໂປໂລບໍ່ຖືເປັນອຸປສັກ. ເພິ່ນຍັງແນມເຫັນໂອກາດຢູ່ຕໍ່ໜ້າເພິ່ນ.

ເຖິງແມ່ນວ່າສະຖານການບໍ່ຄ່ອຍເອື້ອອໍານວຍທີ່ຈະແບ່ງປັນພຣະຄຣິດ, ເຮົາຕ້ອງຊອກຫາໂອກາດທີ່ "ລີ້"ຢູ່ໃນສະຖານະການເຫຼົ່ານັ້ນໃຫ້ໄດ້. ເຮົາຈະເຫັນໂອກາດເຫຼົ່ານັ້ນຢ່າງໃດ? ຕ້ອງເລີ່ມຕົ້ນດ້ວຍການອະທິຖານ. ເຮົາສາມາດຂໍໃຫ້ພຣະເຈົ້າຕຽມໃຈເຮົາດ້ວຍການສວມພຣະເມດຕາຂອງພຣະຄຣິດ, ຕຽມຄວາມຄິດຂອງເຮົາດ້ວຍຄວາມຮູ້ພຣະທັມ, ໃຫ້ເຮົາສາມາດຫຼິງເຫັນບ່ອນທີ່ໂອກາດຊຸກຊ້ອນຢູ່, ແລະຕຽມວິນຍານທີ່ສວມຣິດເດດຈາກພຣະວິນຍານບໍຣິສຸດ.

ໃນວັທນາທັມຄຣິສຕຽນຫຼັງໆ, ຫຼາຍຄົນບໍ່ໄດ້ກະຕືລືລົ້ນກັບການສົນທະນາພຣະທັມຂ່າວປະເສີດ. ບາງຄົນອາດຢາກສົນທະນາປຣັຊຍາ, ແຕ່ບໍ່ຍິນດີໃນ "ສາສນາພົ້ນສມັຍແລ້ວ". ພວກເຮົາບໍ່ຄວນຖືກກີດຂວາງຄືກັບທ່ານໂປໂລ. ໂອກາດເຊັ່ນນີ້ ຍັງເປັນໂອກາດຊີ້ໄປຫາພຣະເຢຊູເມື່ອເຮົາຕິດຕາມຫຼັກທັມທີ່ທ່ານໂປໂລໃຊ້. ພວກເຮົາຈະເຫັນຫຼັກຄໍາສອນນີ້ໃນພາກຕໍ່ໄປ.

## 2. <u>ກິຈການ 17:22-23</u>.

*22. ຝ່າຍໂປໂລຈຶ່ງຢືນຂຶ້ນຖ້າມກາງສະພາອາເຣໂອປາໂຄ ແລ້ວກ່າວວ່າ, "ທ່ານຊາວກຸງອາແຖນເອີຍ, ໃນທຸກສິ່ງທຸກປະການຂ້າພຣະເຈົ້າເຫັນວ່າພວກທ່ານເປັນຜູ້ປະຕິບັດພຣະຕ່າງໆຢ່າງເຄັ່ງຄັດ. 23. ເພາະວ່າເມື່ອຂ້າພະເຈົ້າຜ່ານມາສັງເກດເບິ່ງສິ່ງທັງປວງທີ່ພວກທ່ານນະມັສການ ກໍໄດ້ເຫັນແທ່ນອັນໜຶ່ງມີຄໍາຈາລຶກໄວ້ວ່າ 'ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ' ເຫດສັນນັ້ນ ພຣະທີ່ທ່ານທັງຫຼາຍນະມັສການເມື່ອຍັງບໍ່ຮູ້ຈັກ ພຣະເຈົ້າອົງນັ້ນແຫຼະ, ທີ່ຂ້າພຣະເຈົ້າມາປະກາດແກ່ພວກທ່ານ.*

| *ມີຫຍັງຂັດຂວາງແດ່ໃນການປະກາດຂ່າວປະເສີດໃນວັທນາທັມຂອງເຮົາ?* |
|---|

ເມື່ອທ່ານໂປໂລເຂົ້າສນິດກັບຊາວກຸງອາແຖນແລ້ວ, ເພິ່ນກໍຊອກຫາຊ່ອງທາງໂນ້ມນ້າວເຂົາເຂົ້າສູ່ການສົນທະນາ. ເພິ່ນຮູ້ວ່າເຂົາເປັນຄົນນັບຖືສາສນາ, ການຮູ້ຈັກຫຼັກຄໍາສອນ "ສາສນາ" ທັງສິ້ນຂອງເຂົາບໍ່ໄດ້ມີຄວາມສໍາຄັນກັບພຣະ

ເຈົ້າທ່ຽງແທ້ອົງດຽວແຕ່ຢ່າງໃດ. ພວກເຮົາບໍ່ຄວນຖືກຂັດຂວາງຄືກັບທ່ານໂປໂລ. ແລ້ວຈຸດຂອງການລວມຊຸມນຸມກັນນີ້ ນັບເປັນຈຸດເລີ່ມຕົ້ນເພື່ອໂອ້ລົມໃນສິ່ງທີ່ເຂົາບໍ່ທັນຮູ້ຈັກ-ແລະສິ່ງທີ່ເຂົາບໍ່ຮູ້ແມ່ນພຣະເຢຊູ. ພວກເຂົາບໍ່ເຊື່ອແມ້ກະທັ້ງພຣະເຈົ້າອົງດຽວ, ແຕ່ທ່ານອັຄສາວົກໄດ້ຊອກຫາຊ່ອງທາງດ້ວຍໃຈຈົດຈໍ່ເພື່ອສ້າງສະພານສູ່ຜູ້ຄົນອ້ອມຂ້າງເພິ່ນ. ຈົ່ງສັງເກດຄຳກິຣິຍາບາງຄຳໃນຂໍ້ 22-23: "ຂ້າພະເຈົ້າເຫັນ...ຂ້າພະເຈົ້າສັງເກດເບິ່ງ...ຂ້າພະເຈົ້າໄດ້ເຫັນ." ແລະເພິ່ນໄດ້ພົບເຫັນການຕິດພັນ: ພວກເຂົານະມັສການແລະທ່ານໂປໂລກໍເຄີຍທຳ. ເພິ່ນພົບພື້ນຖານດ້ານຈິດວິນຍານຂອງເຂົາ. ຢືນຢັນວ່າ ເຂົານະມັສການສິ່ງທີ່ຜິດ,ແຕ່ຢ່າງໜ້ອຍເຂົາກໍເປັນຄົນຊອກສແວງຫາຝ່າຍວິນຍານ. ດັ່ງນັ້ນທ່ານໂປໂລຈຶ່ງໃຊ້ສິ່ງນີ້ເພື່ອຕິດສນິດກັບເຂົາ. ໂດຍການສ້າງແທ່ນອັນນຶ່ງ ແລະ ມີຄຳຈາລຶກວ່າ "ແດ່ພຣະເຈົ້າທີ່ເຮົາບໍ່ຮູ້ຈັກ," ເປັນທີ່ປາກົດແຈ້ງວ່າ ຊາວອາແຖນໄດ້ພຍາຍາມເຮັດໃຫ້ແນ່ໃຈວ່າເຂົາບໍ່ໄດ້ມີເຈຕນາຫຼົງລືມ, ຊຶ່ງຈະເປັນການສ່ຽງຕໍ່ການຕໍ່ຕ້ານພຣະໃດພຣະນຶ່ງ. ທ່ານໂປໂລໄດ້ໃຊ້ຄວາມຮູ້ຂອງເຂົາທີ່ວ່າອາດມີພຣະເຈົ້າອົງນຶ່ງທີ່ເຂົາບໍ່ຮູ້ຈັກ ເພື່ອເປັນຈຸດເລີ່ມຕົ້ນແນະນຳ "ພຣະເຈົ້າຜູ້ສ້າງແຜ່ນດິນໂລກ ແລະທຸກສິ່ງໃນນັ້ນ" (ຂໍ້ 24). ການໃຊ້ສິ່ງທີ່ເຂົາຮູ້-ແທ່ນຂອງເຂົາເອງແດ່ພຣະເຈົ້າທີ່ເຂົາບໍ່ຮູ້ຈັກ-ທ່ານໂປໂລບອກເຂົາເຖິງສິ່ງທີ່ເຂົາບໍ່ຮູ້ກ່ຽວກັບ "ພຣະເຈົ້າຜູ້ເປັນເຈົ້າຂອງສວັນແລະແຜ່ນດິນໂລກ" ແລະແຜນການໄຖ່ພວກເຂົາ.

ເຖິງແມ່ນພວກເຮົາອາດຄິດວ່າຄົນຍັງບໍ່ພ້ອມທີ່ຈະຮັບຟັງຂ່າວປະເສີດ, ພວກເຂົາກໍມັກສົນທະນາເລື່ອງວິນຍານເວລາເຮົາເລີ່ມຕົ້ນດ້ວຍພື້ນຖານດຽວກັນ ເພື່ອຈັດວາງທັງສອງຝ່າຍໃຫ້ຢູ່ໃນລະດັບສເມີກັນ. ເພື່ອຄວາມກະຈ່າງແຈ້ງ, ຄວາມເຊື່ອຂອງເຮົາບໍ່ເທົ່າທຽມກັນ, ແຕ່ໃນຖານະຜູ້ຕິດຕາມພຣະຄຣິດ, ພວກເຮົາບໍ່ຄວນຫຍັບເຂົ້າຫາ ດ້ວຍການສົນທະນາດ້ວຍບັນຍາກາດທີ່ເຮົາຢູ່ສູງກວ່າ. ແທນທີ່ຈະເຮັດຢ່າງນັ້ນ ເຮົາຄວນຖ່ອມຕົວເຮົາລົງ ແລະຊອກຫາບ່ອນເຂົ້າກັນ ເພື່ອເປັນບ່ອນເປີດການແບ່ງປັນຂ່າວປະເສີດສຳຄັນແຫ່ງຄວາມຈິງ. ເລີ່ມຟັງແລະຊອກຫາສິ່ງທີ່ຄືກັນ-ພິຈາຣະນາສິ່ງທີ່ເຂົາເວົ້າຮອດເຊັ່ນ, ເຄື່ອງໝາຍທີມທີ່ເຂົານຸ່ງ, ສັນຍາລັກສາສນາທີ່ເຂົາວາງສະແດງ. ສິ່ງຕ່າງໆເຫຼົ່ານີ້ອາດສາມາດເປັນສະນວນນຳໄປສູ່ການເລີ່ມຕົ້ນສົນທະນາຂ່າວປະເສີດ.

*ມີສະພານຫຍັງແດ່ທີ່ຈະນຳໄປສູ່ການແບ່ງປັນຂ່າວປະເສີດໃນວັທນາທັມຂອງເຮົາ?*

## 3. <u>ກິຈການ 17:30-31.</u>

*30. ໃນສມັຍທີ່ມະນຸດຍັງໂງ່ບໍ່ຮູ້ຈັກພຣະເຈົ້າພຣະອົງກໍບໍ່ຊົງຖືໂທດ ແຕ່ບັດນີ້ພຣະອົງຊົງສັ່ງແກ່ມະນຸດທັງປວງໃນທົ່ວທຸກບ່ອນໃຫ້ຖິ້ມໃຈເກົ່າເອົາໃຈໃໝ່. 31. ເພາະວ່າພຣະອົງໄດ້ຊົງກຳນົດວັນນຶ່ງໄວ້ ໃນວັນນັ້ນພຣະອົງຈະຊົງພິພາກສາໂລກຕາມຍຸຕິທັມ ໂດຍມະນຸດຜູ້ນຶ່ງຊຶ່ງພຣະອົງໄດ້ຊົງຕັ້ງໄວ້ ແລະ ພຣະເຈົ້າໄດ້ຊົງໂຜດໃຫ້ຄົນທັງປວງມີຄວາມແນ່ໃຈໃນເຣື່ອງນີ້ ໂດຍຊົງບັນດານໃຫ້ມະນຸດຜູ້ນັ້ນເປັນຄືນມາຈາກຕາຍ."*

ມັນເປັນການດີທີ່ໄປບ່ອນທີ່ເຂົາເປັນແລະເຂົ້າຮ່ວມໃນສິ່ງທີ່ເຂົາທຳ. ມັນເປັນການດີທີ່ຕັ້ງຄຳຖາມແລະເລີ່ມການສົນທະນາ. ແຕ່ມັນບໍ່ສຸດຢູ່ຫັ້ນ. ຖ້າຢຸດຢູ່ຫັ້ນກໍເປັນເໝືອນການຍ່າງໜີຈາກມາລາທອນຂນະຍັງບໍ່ເຖິງເສັ້ນໄຊ. ພວກເຮົາຕ້ອງເຂົ້າໃຫ້ເຖິງຄວາມຈິງສິ່ງທີ່ພຣະເຢຊູໄດ້ເຮັດເພື່ອສ້າງຄວາມສັມພັນກັບພຣະເຈົ້າໃຫ້ເປັນໄປໄດ້.

ດັ່ງທີ່ທ່ານໂປໂລໄດ້ກ່າວກັບຊາວອາແຖນທີ່ສະພາ ອາເຣໂອປາໂຄ, ເພິ່ນໄດ້ນຳສເນີໂຄງຮ່າງຂ່າວປະເສີດໃນເນື້ອຫາທີ່ຄຸ້ນຫູຜູ້ຟັງ. ເພິ່ນເລົ່າບົດກະວີຂອງເຂົາແລະເວົ້າພາສາຂອງເຂົາ, ແຕ່ ເພິ່ນຍັງໂນ້ມນ້າວສູ່ຂ່າວປະເສີດ. ຊາວອາແຖນຂັດຂ້ອງທີ່ຈະຍອມຮັບວ່າພຣະເຈົ້າເປັນພຣະຜູ້ສ້າງແລະພິພາກສາ ແລະເຊື່ອໃນການເປັນຄືນມາຈາກຕາຍຂອງພຣະເຢຊູ, ແຕ່ຈຸດນີ້, ທ່ານໂປໂລບໍ່ໄດ້ປະນີປະນອມຕໍ່ຄວາມຈິງ. ທ່ານໂປໂລໄດ້ເຮັດສິ່ງທີ່ເພິ່ນສາມາດເຮັດເພື່ອໃຫ້ເປັນທີ່ປະຈັກແຈ້ງແກ່ຊາວອາແຖນ. ເວລາເພິ່ນກ່າວເຖິງການເປັນຄືນມາຂອງພຣະເຢຊູນັ້ນ ມີບາງຄົນໃນຝູງຊົນໄດ້ສັ່ງໃຫ້ເພິ່ນຢຸດ. ບາງຄົນຮອດໄດ້ເຍາະເຍີ້ຍເພິ່ນ, ແຕ່ຄຳພຍານຂອງທ່ານໂປໂລບໍ່ໄດ້ຢູ່ໃນຈິດສຳນຶກ

ເຂົາ. ມີບາງຄົນຢາກຮູ້ຕື່ມ. ພວກເຮົາເຊື່ອໝັ້ນວ່າທ່ານໂປໂລພົບໂອກາດອື່ນເພື່ອສືບຕໍ່ອະທິບາຍຂ່າວປະເສີດກັບພວກທີ່ຢາກຮູ້ຕື່ມ. ໃນການປະເຊີນແລະການສົນທະນາຂອງເຮົາເອງ, ພວກເຮົາຕ້ອງນຳສເນີຂ່າວປະເສີດໃຫ້ຄົບຖ້ວນ. ການຕອບສນອງຕໍ່ຂ່າວປະເສີດຕ້ອງການບອກໃຫ້ຮູ້ວ່າຄວາມບາບແຍກເຮົາອອກຈາກພຣະເຈົ້າ. ພວກເຮົາຕ້ອງຍອມຮັບວ່າຕ້ອງໄດ້ຈ່າຍຄ່າຂອງຄວາມບາບທີ່ເຮົາໄດ້ກໍ່ໄວ້. ສິ່ງນີ້ ນຳເຮົາໃຫ້ສຳນຶກໄດ້ວ່າພຣະເຢຊູເປັນເຄື່ອງຖວາຍບູຊາດຽວທີ່ພຣະເຈົ້າຮັບໄດ້ເພື່ອທົດແທນຄວາມບາບຂອງເຮົາ. ສຸດທ້າຍນີ້ ພວກເຮົາຕ້ອງເຂົ້າໃຈວ່າພຣະເຢຊູໄດ້ກາຍເປັນຜູ້ແທນເຮົາຊຶ່ງສາມາດນຳເຮົາສູ່ຄວາມສັມພັນກັບພຣະເຈົ້າ. ພຣະເຢຊູໄດ້ປົດປ່ອຍເຮົາຈາກໜີ້ຄວາມຕາຍ ແລະນັ້ນແມ່ນຂ່າວປະເສີດທີ່ວິເສດທີ່ສຸດ.

ທ່ານໂປໂລພົບປະກັບຊາວອາແຖນບົນພື້ນຖານຂອງເຂົາ, ນຳເອົາຄວາມຈິງຂອງພຣະເຢຊູມາສູ່ການສົນທະນາ ແລະຜ່ານເສັ້ນໄຊໃນການສື່ສານຂ່າວປະເສີດ. ສ່ວນຜົນຮັບນັ້ນຂຶ້ນຢູ່ກັບພຣະເຈົ້າ. ພວກເຮົາສາມາດເຮັດຄືກັນສຳລັບການປະເຊີນຂອງເຮົາ.

*ພວກເຮົາສາມາດພຽນພຍາຍາມເຜີຍແຜ່ຂ່າວການພິພາກສາແກ່ຜູ້ທີ່ຢາກຟັງຢ່າງໃດ?*

## ນຳໃຊ້ໃນຊີວິດ

ທ່ານຈະເຮັດຫຍັງໃນອາທິດນີ້ເພື່ອແບ່ງປັນຂ່າວປະເສີດກັບຜູ້ໃດຜູ້ນຶ່ງ? ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

- **ເປີດໃຈຂອງທ່ານ.** ຈົ່ງອະທິຖານແລະທູນຂໍພຣະເຈົ້າເຮັດໃຫ້ທ່ານໃສ່ໃຈໂອກາດອ້ອມຂ້າງທ່ານເພື່ອເວົ້າກ່ຽວກັບຄວາມເຊື່ອຂອງທ່ານ. ຈົ່ງອະທິຖານຂໍໃຫ້ທ່ານມີໃຈຢາກແບ່ງປັນພຣະຄຣິດກັບຄົນອື່ນ.
- **ເປີດຕາຂອງທ່ານ.** ຈົ່ງເຮັດບັນຊີບ່ອນທີ່ທ່ານຢາກແບ່ງປັນກັບຄົນອື່ນ. ດ້ວຍບັນຊີນັ້ນ ຈົ່ງຊີ້ແຈງທາງບ່ອນທີ່ທ່ານສົນໃຈເຫຼົ່ານັ້ນ ເພື່ອທ່ານສາມາດນຳໃຊ້ປ່ຽນການສົນທະນາສູ່ຂ່າວປະເສີດ.
- **ເປີດປາກຂອງທ່ານ.** ຈົ່ງພຽນພຍາຍາມຂຍາຍປະຕູໂອກາດແບ່ງປັນພຣະຄຣິດ. ຈົ່ງຕັ້ງໃຈສ້າງຂົວຕໍ່ຣະຫວ່າງທ່ານກັບຄົນອື່ນເພື່ອເວົ້າຂ່າວປະເສີດ.

ເຮົາອາດຈະຫຍຸ້ງກັບວຽກໄດ້ຢ່າງງ່າຍດາຍ ແຖມປັກໃຈໃສ່ສິ່ງດີໆ ຊຶ່ງຈະເຮັດໃຫ້ພວກເຮົາສູນເສັຽຄົນທີ່ພຣະເຈົ້ານຳມາສູ່ເສັ້ນທາງທີ່ເຮົາຜ່ານໄປມາ. ດັ່ງທີ່ທ່ານໂປໂລໄດ້ສວຍເອົາໂອກາດ, ພວກເຮົາກໍເຊັ່ນດຽວກັນ ຄວນສວຍເອົາໂອກາດແຜ່ຂ່າວປະເສີດໄປສູ່ທຸກຄົນທີ່ຢາກຟັງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**